ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 490/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 16 ມິຖຸນາ 2025

# ຂໍ້ຕົກລົງ
# ວ່າດ້ວຍທຸລະກຳໂອນເງິນ ທີ່ມີມູນຄ່າເກີນກຳນົດ

- ອີງຕາມ ກົດໝາຍວ່າດ້ວຍການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 01 ກໍລະກົດ 2024;
- ອີງຕາມ ການຄົ້ນຄວ້າຂອງສຳນັກງານຂໍ້ມູນຕ້ານການຟອກເງິນ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

## ຜູ້ວ່າການ ອອກຂໍ້ຕົກລົງ:

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອຜັນຂະຫຍາຍກົດໝາຍວ່າດ້ວຍການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ກ່ຽວກັບທຸລະກຳໂອນເງິນ ທີ່ມີມູນຄ່າເກີນກຳນົດ.

### ມາດຕາ 2 ທຸລະກຳໂອນເງິນ ທີ່ມີມູນຄ່າເກີນກຳນົດ

ທຸລະກຳໂອນເງິນ ແມ່ນ ການໃຫ້ບໍລິການໂອນເງິນ ພາຍໃນ ແລະ ຕ່າງປະເທດ ຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານໃຫ້ແກ່ລູກຄ້າ ດ້ວຍຮູບແບບການຊຳລະທີ່ມີໝາຍເລກ ຫຼື ລະຫັດອ້າງອີງ ແລະ ການຊຳລະທີ່ມີເອກະສານອ້າງອີງ.

ທຸລະກຳໂອນເງິນ ທີ່ມີມູນຄ່າເກີນກຳນົດ ແມ່ນ ການດຳເນີນທຸລະກຳເງິນໂອນ ທີ່ມີມູນຄ່າ ຊາວຫ້າລ້ານ (25,000,000) ກີບ ຫຼື ທຽບເທົ່າຂຶ້ນໄປ ຕໍ່ຄັ້ງ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຫົວໜ່ວຍທີ່ມີໜ້າທີ່ລາຍງານ ໝາຍເຖິງ** ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ, ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ແລະ ຜູ້ໃຫ້ບໍລິການຊຳລະເງິນອື່ນ ທີ່ໃຫ້ບໍລິການໂອນເງິນ ພາຍໃນ ແລະ ຕ່າງປະເທດ. ໃນນີ້, ຫົວໜ່ວຍທີ່ມີໜ້າທີ່ລາຍງານ ປະກອບດ້ວຍ ຫົວໜ່ວຍທີ່ມີໜ້າທີ່ລາຍງານທີ່ສັ່ງໂອນ, ຫົວໜ່ວຍທີ່ມີໜ້າທີ່ລາຍງານທີ່ໄດ້ຮັບເງິນໂອນ ແລະ ຫົວໜ່ວຍທີ່ມີໜ້າທີ່ລາຍງານທີ່ເຮັດໜ້າທີ່ເປັນສື່ກາງ;

2. **ການໂອນເງິນພາຍໃນປະເທດ ໝາຍເຖິງ** ການໂອນເງິນ ທີ່ເກີດຂຶ້ນລະຫວ່າງ ຫົວໜ່ວຍທີ່ມີໜ້າທີ່ລາຍງານທີ່ສັ່ງໂອນ ແລະ ຫົວໜ່ວຍທີ່ມີໜ້າທີ່ລາຍງານທີ່ໄດ້ຮັບເງິນໂອນ ຢູ່ ສປປ ລາວ;

3. **ການໂອນເງິນຕ່າງປະເທດ ໝາຍເຖິງ** ການໂອນເງິນ ທີ່ເກີດຂຶ້ນລະຫວ່າງ ຫົວໜ່ວຍທີ່ມີໜ້າທີ່ລາຍງານທີ່ສັ່ງໂອນ ແລະ ຫົວໜ່ວຍທີ່ມີໜ້າທີ່ລາຍງານທີ່ໄດ້ຮັບເງິນໂອນ ແລະ/ຫຼື ໂດຍຜ່ານຫົວໜ່ວຍທີ່ມີໜ້າທີ່ລາຍງານທີ່ເຮັດໜ້າທີ່ເປັນສື່ກາງ ຢູ່ປະເທດແຕກຕ່າງກັນ;

4. **ຫົວໜ່ວຍທີ່ມີໜ້າທີ່ລາຍງານທີ່ສັ່ງໂອນ ໝາຍເຖິງ** ຫົວໜ່ວຍທີ່ມີໜ້າທີ່ລາຍງານ ທີ່ຈະໂອນເງິນ ຫຼື ໂອນເງິນ ເມື່ອໄດ້ຮັບຄຳຮ້ອງຂໍໃຫ້ມີການໂອນເງິນ ຈາກຜູ້ສັ່ງໂອນ;

5. **ຫົວໜ່ວຍທີ່ມີໜ້າທີ່ລາຍງານທີ່ໄດ້ຮັບເງິນໂອນ ໝາຍເຖິງ** ຫົວໜ່ວຍທີ່ມີໜ້າທີ່ລາຍງານ ທີ່ໄດ້ຮັບເງິນໂອນ ຈາກຫົວໜ່ວຍທີ່ມີໜ້າທີ່ລາຍງານທີ່ສັ່ງໂອນ ໂດຍກົງ ຫຼື ໂດຍຜ່ານຫົວໜ່ວຍທີ່ມີໜ້າທີ່ລາຍງານທີ່ເຮັດໜ້າທີ່ເປັນສື່ກາງ ເພື່ອສົ່ງມອບເງິນໃຫ້ແກ່ຜູ້ໄດ້ຮັບຜົນປະໂຫຍດ;

6. **ຫົວໜ່ວຍທີ່ມີໜ້າທີ່ລາຍງານທີ່ເຮັດໜ້າທີ່ເປັນສື່ກາງ ໝາຍເຖິງ** ໜຶ່ງ ຫຼື ຫຼາຍ ຫົວໜ່ວຍທີ່ມີໜ້າທີ່ລາຍງານ ທີ່ເຮັດໜ້າທີ່ໂອນເງິນ ໃນນາມຫົວໜ່ວຍທີ່ມີໜ້າທີ່ລາຍງານທີ່ສັ່ງໂອນ ແລະ/ຫຼື ຫົວໜ່ວຍທີ່ມີໜ້າທີ່ລາຍງານທີ່ໄດ້ຮັບເງິນໂອນ;

7. **ການຊຳລະທີ່ມີລະຫັດອ້າງອີງ ໝາຍເຖິງ** ການຊຳລະ ທີ່ມີຂໍ້ຄວາມໂອນເງິນ ແລະ ຂໍ້ຄວາມສັ່ງຈ່າຍເງິນ ຈາກຫົວໜ່ວຍທີ່ມີໜ້າທີ່ລາຍງານທີ່ສັ່ງໂອນ ໄປຫາຫົວໜ່ວຍທີ່ມີໜ້າທີ່ລາຍງານທີ່ໄດ້ຮັບເງິນໂອນ ໂດຍກົງ ຫຼື ຜ່ານໜຶ່ງ ຫຼື ຫຼາຍ ຫົວໜ່ວຍທີ່ມີໜ້າທີ່ລາຍງານທີ່ເຮັດໜ້າທີ່ເປັນສື່ກາງ;

8. **ການຊຳລະທີ່ມີເອກະສານອ້າງອີງ ໝາຍເຖິງ** ການຊຳລະ ທີ່ມີຂໍ້ຄວາມໂອນເງິນ, ຂໍ້ຄວາມສັ່ງຈ່າຍເງິນ ແລະ ເອກະສານຄັດຕິດ ຈາກຫົວໜ່ວຍທີ່ມີໜ້າທີ່ລາຍງານທີ່ສັ່ງໂອນ ໄປຫາຫົວໜ່ວຍທີ່ມີໜ້າທີ່ລາຍງານທີ່ໄດ້ຮັບເງິນໂອນ ໂດຍກົງ ຫຼື ຜ່ານໜຶ່ງ ຫຼື ຫຼາຍ ຫົວໜ່ວຍທີ່ມີໜ້າທີ່ລາຍງານທີ່ເຮັດໜ້າທີ່ເປັນສື່ກາງ;

9. **ໝາຍເລກອ້າງອີງການເຮັດທຸລະກຳ ໝາຍເຖິງ** ກຸ່ມຕົວເລກ, ກຸ່ມຕົວອັກສອນ ຫຼື ສັນຍາລັກ ປະສົມກັນ ໃນລະບົບຂໍ້ຄວາມ ທີ່ຫົວໜ່ວຍທີ່ມີໜ້າທີ່ລາຍງານກຳນົດ ເພື່ອເປັນບ່ອນອີງຢັ້ງຢືນໃນການສັ່ງຈ່າຍເງິນ ໃຫ້ຜູ້ໄດ້ຮັບເງິນປະໂຫຍດ;

10. **ການໂອນເງິນເປັນຊຸດ ໝາຍເຖິງ** ການໂອນເງິນຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານທີ່ສັ່ງໂອນ ຕາມການຮ້ອງຂໍຂອງຜູ້ສັ່ງໂອນ ຈາກບັນຊີດຽວໄປຫາ ຫຼາຍບັນຊີພ້ອມກັນ.

### ມາດຕາ 4 ຂອບເຂດນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ຫົວໜ່ວຍທີ່ມີໜ້າທີ່ລາຍງານ ທີ່ເຄື່ອນໄຫວກ່ຽວຂ້ອງກັບການດຳເນີນທຸລະກຳໂອນເງິນ.

ຂໍ້ຕົກລົງສະບັບນີ້ ບໍ່ນຳໃຊ້ສຳລັບທຸລະກຳໂອນເງິນ ດ້ວຍບັດຊຳລະທຸກຮູບແບບ ເປັນຕົ້ນ ບັດເງິນຝາກ, ບັດຕື່ມເງິນ, ບັດສິນເຊື່ອ ທີ່ສາມາດຊຳລະທາງເອເລັກໂຕຣນິກ ແລະ ການໂອນເງິນຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານດ້ວຍກັນ ທີ່ຕິດພັນກັບທຸລະກິດຂອງຕົນ.

### ມາດຕາ 5 ການເກັບກຳຂໍ້ມູນການໂອນເງິນ

ໃນການໃຫ້ບໍລິການກ່ຽວກັບການໂອນເງິນ ຫຼື ການໂອນເງິນເປັນຊຸດ ພາຍໃນ ແລະ ຕ່າງປະເທດ ທີ່ມີມູນຄ່າເກີນກຳນົດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 2 ຂອງຂໍ້ຕົກລົງສະບັບນີ້ ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງເກັບກຳຂໍ້ມູນຕົ້ນຕໍຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ພ້ອມທັງກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນ ດັ່ງນີ້:

1. ຂໍ້ມູນຂອງຜູ້ສັ່ງໂອນ

1.1. ຊື່;

1.2. ທີ່ຢູ່ປັດຈຸບັນ (ບ້ານ, ເມືອງ ແລະ ແຂວງ), ເລກທີ ບັດປະຈຳຕົວ ຫຼື ໜັງສືຜ່ານແດນ, ວັນ, ເດືອນ, ປີເກີດ ແລະ ສະຖານທີ່ເກີດ ຫຼື ວັນ, ເດືອນ, ປີ ສ້າງຕັ້ງ ຫຼື ເອກະສານອື່ນ ທີ່ສາມາດຢັ້ງຢືນຕົວຕົນ;

1.3. ເບີໂທຕິດຕໍ່;

1.4. ເລກບັນຊີ (ກໍລະນີນຳໃຊ້ບັນຊີໃນການໂອນເງິນ) ຫຼື ໝາຍເລກອ້າງອີງໃນການເຮັດທຸລະກຳ (ກໍລະນີບໍ່ໄດ້ນຳໃຊ້ບັນຊີໃນການໂອນເງິນ);

1.5. ຈຸດປະສົງຂອງການໂອນເງິນ;

1.6. ຈຳນວນເງິນ ແລະ ສະກຸນເງິນ ທີ່ໂອນ;

1.7. ສາຍພົວພັນ ລະຫວ່າງ ຜູ້ສັ່ງໂອນ ແລະ ຜູ້ໄດ້ຮັບຜົນປະໂຫຍດ;

1.8. ຂໍ້ມູນອື່ນ ທີ່ຈຳເປັນ.

2. ຂໍ້ມູນຂອງຜູ້ໄດ້ຮັບຜົນປະໂຫຍດ: ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1.1, 1.3, 1.4 ແລະ 1.8 ຂອງມາດຕານີ້.

ສຳລັບທຸລະກຳໂອນເງິນຕ່າງປະເທດ ທີ່ມີມູນຄ່າຕ່ຳກວ່າ ມູນຄ່າທີ່ໄດ້ກຳນົດໄວ້ໃນມາດຕາ 2 ຂອງຂໍ້ຕົກລົງສະບັບນີ້ ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງເກັບກຳຂໍ້ມູນຕົ້ນຕໍ ຂອງຜູ້ສັ່ງໂອນ ແລະ ຜູ້ໄດ້ຮັບຜົນປະໂຫຍດ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1.1 ແລະ 1.4 ຂອງມາດຕານີ້. ໃນກໍລະນີຫາກພົບເຫັນຂໍ້ມູນດັ່ງກ່າວ ຕິດພັນ ຫຼື ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕ້ອງການກວດກາ ແລະ ຢັ້ງຢືນຂໍ້ມູນ ພ້ອມທັງດຳເນີນການຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂໍ້ 4 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 6 ຄວາມຮັບຜິດຊອບຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ**

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ມີຄວາມຮັບຜິດຊອບ ດັ່ງນີ້:

1. ເກັບກຳ ແລະ ກວດກາ ຂໍ້ມູນກ່ຽວກັບທຸລະກຳການໂອນເງິນ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ລວມທັງກວດສອບ ຫຼື ຢັ້ງຢືນຕົວຕົນ ຂອງຜູ້ສັ່ງໂອນ ຫຼື ຜູ້ໄດ້ຮັບຜົນປະໂຫຍດ ທີ່ບໍ່ເຄີຍຖືກກວດສອບ ຫຼື ຢັ້ງຢືນ ຕົວຕົນມາກ່ອນ;

2. ກຳນົດນະໂຍບາຍ ແລະ ຂັ້ນຕອນ ການຈັດຕັ້ງປະຕິບັດຫຼັກການປະເມີນ ແລະ ບໍລິຫານຄວາມສ່ຽງ ກ່ຽວກັບທຸລະກຳການໂອນເງິນ ຢ່າງມີປະສິດທິຜົນ ເພື່ອພິຈາລະນາວ່າ ກໍລະນີໃດຄວນປະຕິເສດ ແລະ ຢຸດຕິການໂອນ ຫຼື ເພື່ອກຳນົດມາດຕະການໃນການຕິດຕາມຂໍ້ມູນ ຢ່າງເໝາະສົມ;

3. ນຳໃຊ້ມາດຕະການທີ່ເໝາະສົມ ໃນການຕິດຕາມ ກວດກາ ທຸລະກຳການໂອນເງິນຕ່າງປະເທດ ທີ່ກຳລັງດຳເນີນການຢູ່ ຫຼື ພາຍຫຼັງສຳເລັດທຸລະກຳແລ້ວ ກໍລະນີທີ່ຫົວໜ່ວຍທີ່ມີໜ້າທີ່ລາຍງານທີ່ໄດ້ຮັບເງິນໂອນ ພົບເຫັນຂໍ້ມູນການໂອນເງິນ ບໍ່ຄົບຖ້ວນ ຫຼື ຂາດຂໍ້ມູນໃດໜຶ່ງ ເພື່ອຊອກຮູ້ ແລະ ກວດກາຂໍ້ມູນຂອງຜູ້ສັ່ງໂອນ ແລະ ຜູ້ໄດ້ຮັບຜົນປະໂຫຍດ;

4. ວິເຄາະ ແລະ ລາຍງານຂໍ້ມູນກ່ຽວກັບທຸລະກຳການໂອນເງິນ ທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃຫ້ສຳນັກງານຂໍ້ມູນຕ້ານການຟອກເງິນ ພາຍໃນ ຊາວສີ່ ຊົ່ວໂມງ;

5. ເກັບຮັກສາຂໍ້ມູນກ່ຽວກັບການໂອນເງິນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 5 ຂອງຂໍ້ຕົກລົງສະບັບນີ້ ຢ່າງໜ້ອຍ ສິບປີ ນັບແຕ່ວັນທີ່ໄດ້ປະຕິບັດທຸລະກຳສຳເລັດ ຫຼື ສິ້ນສຸດສາຍພົວພັນທຸລະກິດກັບລູກຄ້າ ພ້ອມທັງສະໜອງ

ຂໍ້ມູນກ່ຽວກັບການໂອນເງິນ ໃຫ້ສຳນັກງານຂໍ້ມູນຕ້ານການຟອກເງິນ ຫຼື ໜ່ວຍງານຂ່າວກອງທາງດ້ານການເງິນຂອງຕ່າງປະເທດ ໂດຍຜ່ານສຳນັກງານຂໍ້ມູນຕ້ານການຟອກເງິນ ທັນທີ ເມື່ອມີການຮ້ອງຂໍ;

6. ຮັກສາຄວາມລັບການລາຍງານ ໃຫ້ສອດຄ່ອງກັບກົດໝາຍ ແລະ ບໍ່ເປັນອຸປະສັກໃນການສະໜອງຂໍ້ມູນໃຫ້ເຈົ້າໜ້າທີ່ທີ່ກ່ຽວຂ້ອງ;

7. ມີຄວາມຮັບຜິດຊອບອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 7 ຂໍ້ຫ້າມ**

ຫ້າມຫົວໜ່ວຍທີ່ມີໜ້າທີ່ລາຍງານ ມີພຶດຕິກຳ ດັ່ງນີ້:

1. ໃຫ້ບໍລິການກ່ຽວກັບການໂອນເງິນ ທີ່ບໍ່ມີຂໍ້ມູນ ຫຼື ຂາດຂໍ້ມູນໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ ມາດຕາ 5 ຂອງຂໍ້ຕົກລົງສະບັບນີ້;

2. ໃຫ້ບໍລິການກ່ຽວກັບການໂອນເງິນ ກັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຢູ່ໃນບັນຊີຂອງສະພາຄວາມໝັ້ນຄົງອົງການສະຫະປະຊາຊາດ;

3. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 8 ມາດຕະການຕໍ່ຜູ້ລະເມີດ**

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ລົງໂທດທາງອາຍາຕາມກົດໝາຍ.

**ມາດຕາ 9 ການຈັດຕັ້ງປະຕິບັດ**

ສຳນັກງານຂໍ້ມູນຕ້ານການຟອກເງິນ ເປັນເຈົ້າການຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 10 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນທີ່ລົງລາຍເຊັນ ເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງວ່າດ້ວຍທຸລະກຳໂອນເງິນ ທີ່ມີມູນຄ່າເກີນກຳນົດ ສະບັບເລກທີ 963/ທຫລ, ລົງວັນທີ 27 ພະຈິກ 2015. ໑໕

ເຊັນແທນ **ຜູ້ວ່າການ**

ທະນາຄານແຫ່ງ ສ.ປ.ປ ລາວ
ຜູ້ວ່າການ

**ອາລຸນ ບຸນຍົງ**